ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ 140/ທຫລ
ນະຄອນຫລວງວຽງຈັນ, ວັນທີ 19 ກຸມພາ 2019

# ຂໍ້ຕົກລົງ
# ວ່າດ້ວຍການກຳນົດອັດຕາດອກເບ້ຍຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມຂໍ້ຕົກລົງກ່ຽວກັບການກຳນົດອັດຕາດອກເບ້ຍຂອງທະນາຄານທຸລະກິດ ສະບັບເລກທີ 529/ທຫລ, ລົງວັນທີ 21 ກໍລະກົດ 2015;
- ອີງຕາມຂໍ້ຕົກລົງກ່ຽວກັບການກຳນົດສ່ວນຕ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນ້ຳໜັກສະກຸນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 1231/ທຫລ, ລົງວັນທີ 08 ທັນວາ 2017.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1** ອະນຸຍາດໃຫ້ທະນາຄານທຸລະກິດ ກຳນົດອັດຕາດອກເບ້ຍເງິນຝາກ-ເງິນກູ້ທຸກສະກຸນຂອງຕົນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດດັ່ງນີ້:

1. ອັດຕາດອກເບ້ຍເງິນຝາກ:
   - ໃຫ້ທະນາຄານທຸລະກິດ ກຳນົດອັດຕາດອກເບ້ຍເງິນຝາກຂອງຕົນໃຫ້ເຫດເໝາະກັບສະພາບພື້ນຖານເສດຖະກິດ ແລະ ຫຼັກການບໍລິຫານຕົ້ນທຶນໃນການດຳເນີນທຸລະກິດທະນາຄານຂອງຕົນ;
   - ບໍ່ອະນຸຍາດໃຫ້ທະນາຄານທຸລະກິດກຳນົດອັດຕາດອກເບ້ຍເງິນຝາກແບບຈູງໃຈ ເພື່ອເປັນການລະດົມທຶນແກ້ໄຂບັນຫາສະພາບຄ່ອງ, ບັນຫາອັດຕາສ່ວນ NPL ເກີນ 3%, ເພື່ອເປັນການບິດເບືອນ ຫຼື ທຸ້ມຕະຫຼາດ;
   - ທະນາຄານທຸລະກິດ ຕ້ອງສ້າງຄວາມໂປ່ງໃສໃນການໃຫ້ບໍລິການລູກຄ້າ ໂດຍການເຜີຍແຜ່ຂໍ້ມູນກ່ຽວກັບອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້, ເງື່ອນໄຂການປ່ອຍກູ້ ແລະ ຄ່າທຳນຽມເງິນກູ້ຕ່າງໆຢ່າງລະອຽດໃຫ້ລູກຄ້າຂອງຕົນຮັບຮູ້ ໂດຍຜ່ານຫຼາຍຊ່ອງທາງເປັນຕົ້ນ ແຈ້ງການ, ຕິດກະດານຂ່າວ ຫຼື ເວັບໄຊຮ໌ຂອງທະນາຄານຕົນ;
   - ບໍ່ອະນຸຍາດໃຫ້ທະນາຄານທຸລະກິດໂຄສະນາລະດົມທຶນ ຫຼື ໂຄສະນາດຶງດູດລູກຄ້າເກີນຄວາມເປັນຈິງ.

2. ອັດຕາດອກເບ້ຍເງິນກູ້:
   - ອະນຸຍາດໃຫ້ທະນາຄານທຸລະກິດ ກຳນົດອັດຕາດອກເບ້ຍເງິນກູ້ຂອງຕົນຕາມຫຼັກການບໍລິຫານແຫຼ່ງທຶນ, ຄວາມສ່ຽງຕົວຈິງຂອງແຕ່ລະລາຍລູກຄ້າ ບົນຫຼັກການຄວາມຍຸດຕິທຳຂອງທັງສອງຝ່າຍ;
   - ຫ້າມທະນາຄານທຸລະກິດ ກຳນົດອັດຕາດອກເບ້ຍເງິນກູ້ຂອງຕົນໃນລັກສະນະທີ່ເອົາປຽບ ຫຼື ບັງຄັບລູກຄ້າ.

**ມາດຕາ 2** ການລາຍງານ

1. ກ່ອນທະນາຄານທຸລະກິດຈະກຳນົດ ຫຼື ປ່ຽນແປງອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງຕົນແຕ່ລະປະເພດທີ່ມີລັກສະນະກະໂດດຂຶ້ນ ຫຼື ປ່ຽນແປງຫຼາຍທຽບໃສ່ເດືອນຜ່ານມາ ແມ່ນໃຫ້ທະນາຄານທຸລະກິດລາຍງານທະນາຄານແຫ່ງ ສປປ ລາວ ເພື່ອຂໍອະນຸຍາດນຳໃຊ້ອັດຕາດອກເບ້ຍນັ້ນໆກ່ອນ;
2. ການລາຍງານອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດໃຫ້ປະຕິບັດຕາມແຈ້ງການ (ການເປີດນຳໃຊ້ການລາຍງານຂໍ້ມູນໃນໂປຼແກຼມຕິດຕາມຖານະເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດ ສະບັບເລກທີ 96/ກນງ, ລົງວັນທີ 22 ມັງກອນ 2019).

**ມາດຕາ 3** ການລະເມີດ

1. ທະນາຄານທຸລະກິດ ທີ່ລະເມີດການກຳນົດອັດຕາດອກເບ້ຍເງິນຝາກຂອງຕົນ ຕາມຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງນີ້:
   - ຈະຖືກກ່າວເຕືອນເປັນລາຍລັກອັກສອນ ແລະ ພາຍຫຼັງທີ່ໄດ້ຮັບການກ່າວເຕືອນແລ້ວ ຕ້ອງປັບປ່ຽນພາຍໃນ 1 ວັນລັດຖະການ;
   - ກໍລະນີຖືກກ່າວເຕືອນ 1 ຄັ້ງແລ້ວ ແຕ່ຖ້າຍັງສືບຕໍ່ລະເມີດຈະຖືກປັບໃໝ 5.000.000 ກີບ ຕໍ່ວັນ;
   - ຖ້າຖືກປັບໃໝຕິດຕໍ່ກັນ 30 ວັນແລ້ວ ແຕ່ຍັງສືບຕໍ່ລະເມີດຈະຖືກໂຈະ ຫຼື ຈຳກັດການລະດົມທຶນ;
   - ແຕ່ຖ້າຍັງສືບຕໍ່ລະເມີດຈະຖືກຖອນໃບອະນຸຍາດການສ້າງຕັ້ງ ແລະ ດຳເນີນຄະດີຕາມກົດໝາຍ.
2. ທະນາຄານທຸລະກິດ ທີ່ລະເມີດການກຳນົດອັດຕາດອກເບ້ຍເງິນກູ້ຂອງຕົນ ຕາມຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງນີ້:
   - ຈະຖືກກ່າວເຕືອນເປັນລາຍລັກອັກສອນ;
   - ກໍລະນີຖືກກ່າວເຕືອນ 1 ຄັ້ງແລ້ວ ແຕ່ຍັງບໍ່ປັບປຸງ ຈະຖືກປັບໃໝໃນອັດຕາ 0,01% ຂອງຍອດສິນເຊື່ອທ້າຍເດືອນ;
   - ຖ້າຖືກປັບໃໝ 3 ເດືອນ ຕິດຕໍ່ກັນແລ້ວ ແຕ່ຍັງສືບຕໍ່ລະເມີດຈະຖືກໂຈະ ຫຼື ຈາກັດການປ່ອຍສິນເຊື່ອ;
   - ແຕ່ຖ້າຍັງສືບຕໍ່ລະເມີດຈະຖືກຖອນໃບອະນຸຍາດການສ້າງຕັ້ງ ແລະ ດຳເນີນຄະດີຕາມກົດໝາຍ.
3. ທະນາຄານທຸລະກິດຫາກສົ່ງລາຍງານຊັກຊ້າ, ລາຍງານບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມລະບອບການລາຍງານທີ່ກຳນົດໄວ້ ໃນມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການດັ່ງນີ້:
   1) ກໍລະນີສົ່ງລາຍງານຊັກຊ້າ:
      - ຈະຖືກກ່າວເຕືອນເປັນລາຍລັກອັກສອນ;
      - ໃນກໍລະນີກ່າວເຕືອນແລ້ວ ຍັງສືບຕໍ່ລະເມີດ ຈະຖືກປັບໃໝ 1.000.000 ກີບ ຕໍ່ວັນ.

2) ກໍລະນີສົ່ງລາຍງານບໍ່ຖືກຕ້ອງ:
- ກ່າວເຕືອນເປັນລາຍລັກອັກສອນ;
- ໃນກໍລະນີທີ່ກ່າວເຕືອນແລ້ວ ຍັງສືບຕໍ່ລະເມີດ ຫຼື ເປັນການລະເມີດທີ່ໜັກໜ່ວງ ຈະຖືກປັບໄໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ;
- ໂຈະ ຫຼື ປົດຕໍາແໜ່ງຜູ້ບໍລິຫານ;
- ຈໍາກັດການລະດົມທຶນ, ການປ່ອຍສິນເຊື່ອ ຫຼື ມາດຕະການອື່ນ ທີ່ ທະນາຄານແຫ່ງ ສປປ ລາວ ເຫັນວ່າຈໍາເປັນ;
- ຖອນໃບອະນຸຍາດສ້າງຕັ້ງ ແລະ ດໍາເນີນການຊໍາລະສະສາງ.

**ມາດຕາ 4** ມອບໃຫ້ທະນາຄານທຸລະກິດ, ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ສາຂາທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5** ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນຂໍ້ຕົກລົງກ່ຽວກັບການກໍານົດອັດຕາດອກເບ້ຍຂອງທະນາຄານທຸລະກິດ ສະບັບເລກທີ 529/ທຫລ, ລົງວັນທີ 21 ກໍລະກົດ 2015 ແລະ ຂໍ້ຕົກລົງກ່ຽວກັບການກໍານົດສ່ວນຕ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ສະເລ່ຍຖ່ວງນໍ້າໜັກສະກຸນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ ສະບັບເລກທີ 1231/ທຫລ, ລົງວັນທີ 08 ທັນວາ 2017, ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ສອນໄຊ ສິດພະໄຊ